ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0496 /ອຄ,ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 13.3.2009

# ແຈ້ງການ

ເຖິງ :

- ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
- ຫ້ອງ ການອຸດສາຫະກຳ ແລະ ການຄ້າເມືອງ ;

ເລື່ອງ : ຍົກເລີກການຕໍ່ທະບຽນວິສາຫະກິດ ໃນທຸກຮູບແບບ

- ອີງຕາມມາດຕາ 12 ແລະ ມາດຕາ 235 ຂອງກົດໝາຍວ່າດ້ວຍວິສາຫະກິດ .

ພາຍຫຼັງກົດໝາຍວ່າດ້ວຍວິສາຫະກິດ ໄດ້ຮັບການປະກາດໃຊ້, ພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໂດຍສະເພາະບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໄດ້ພ້ອມກັນສຸມໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນ ຈິດໃຈຂອງກົດໝາຍດັ່ງກ່າວຢ່າງຕັ້ງໜ້າ ເຮັດໃຫ້ຊ່ອງຫວ່າງສວຍໂອກາດ, ຂັ້ນຂອດບໍລິການທີ່ເປັນອຸປະສັກລ້າງຄວາມລຳຄານແກ່ການປະກອບອາຊີບຂອງປະຊາຊົນບັນດາເຜົ່າ ໄດ້ຮັບການແກ້ໄຂຢ່າງເປັນຮູບປະທຳ ນຳມາຊຶ່ງບັນຍາກາດຂອງການດຳເນີນທຸລະກິດທີ່ນັບມື້ ນັບສະດວກສະບາຍ ແລະ ເອື້ອອຳນວຍຍິ່ງຂຶ້ນ ທັງໝົດນີ້ຈະກາຍເປັນປັດໃຈສຳຄັນໜຶ່ງໃຫ້ແກ່ການພັດທະນາເສດຖະກິດຂອງຊາດ, ສ້າງງານ, ສ້າງລາຍໄດ້ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ລຸດລົງເທື່ອລະກ້າວ. ແຕ່, ຜ່ານການປະຕິບັດຕົວຈິງມາໄລຍະໜຶ່ງ, ສັງເກດເຫັນວ່າ : ຍັງມີຄວາມສັບສົນ ແລະ ຍັງບໍ່ທັນເຂົ້າໃຈແຈ້ງລະຫວ່າງອັນທີ່ເຄີຍເຮັດມາ ແລະ ອັນທີ່ເປັນຫຼັກລະບົບໃໝ່ ເກີດຂຶ້ນໃນບາງພາກສ່ວນ ເຊັ່ນ ບັນຫາການຕໍ່ທະບຽນວິສາຫະກິດ.

ສະນັ້ນ ເພື່ອໃຫ້ເນື້ອໃນຈິດໃຈຂອງກົດໝາຍວິສາຫະກິດ ໄດ້ຮັບການປະຕິບັດຢ່າງເຕັມສ່ວນ, ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ; ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊາບ ແລະ ປະຕິບັດຢ່າງເຂັ້ມງວດ ດັ່ງນີ້ :

1. ການຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍວິສາຫະກິດ ແມ່ນການຮັບຮອງກ່ຽວກັບການແຈ້ງການຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງ ຕາມກົດໝາຍຂອງລັດ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ. ການຂຶ້ນທະບຽນວິສາຫະກິດແມ່ນຂຶ້ນຄັ້ງດຽວ ຕະຫຼອດໄລຍະການເຄື່ອນໄຫວຂອງວິສາຫະກິດນັ້ນ.

ຄຳວ່າ : ການຂຶ້ນທະບຽນວິສາຫະກິດແມ່ນຄັ້ງດຽວ ໝາຍເຖິງບໍ່ມີການຂຶ້ນທະບຽນວິສາຫະກິດ ໃຫ້ວິສາຫະກິດທີ່ໄດ້ຂຶ້ນທະບຽນແລ້ວອີກ ເວັ້ນເສຍແຕ່ກໍລະນີ (ເຊັ່ນ : 1) ວິສາຫະກິດດັ່ງກ່າວ ຖືກຍຸບເລີກ ຫລື ລົ້ມລະລາຍ ແລ້ວສ້າງຕັ້ງໃໝ່ ຕາມຂັ້ນຕອນຂອງກົດໝາຍ ຫລື 2) ກົດໝາຍວ່າດ້ວຍວິສາຫະກິດ (ໃນສ່ວນທີ່ກ່ຽວຂ້ອງກັບການຂຶ້ນທະບຽນ) ມີການປັບປຸງປ່ຽນແປງໃໝ່ ຊຶ່ງມີຜົນໃຫ້ຕ້ອງຂຶ້ນທະບຽນວິສາຫະກິດຕາມບົດບັນຍັດໃໝ່ (ຖ້າມີ) ;

ການດັດແປງທະບຽນວິສາຫະກິດ ແມ່ນເກີດຈາກການປ່ຽນແປງບາງສ່ວນໃນວິສາຫະກິດ ທີ່ພາໃຫ້ຕ້ອງດັດແປງທະບຽນວິສາຫະກິດ (ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍ) ແລະ ການດັດແປງທະບຽນວິສາຫະກິດ ບໍ່ແມ່ນການສ້າງນິຕິບຸກຄົນໃໝ່ ເຖິງແມ່ນຊື່ວິສາຫະກິດ ຫລື ຜູ້ອຳນວຍການ ປ່ຽນແປງໄປກໍຕາມ ເພາະວ່າຄວາມຮັບຜິດຊອບຂອງນິຕິບຸກຄົນທີ່ໄດ້ຂຶ້ນທະບຽນມານັ້ນ (ສິດ ແລະ ພັນທະ) ຍັງຢູ່ ;

2. ບົນພື້ນຖານເຫດຜົນທາງກົດໝາຍ ຕາມບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ການອະທິບາຍເພີ່ມເຕີມຂ້າງເທິງ, ການຕໍ່ທະບຽນວິສາຫະກິດ ແມ່ນຂັດກັບບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ເປັນອຸປະສັກໜຶ່ງ ຕໍ່ການປະກອບອາຊີບຂອງປະຊາຊົນບັນດາເຜົ່າ ບໍ່ວ່າຈະດ້ວຍເຫດຜົນ (ເຊັ່ນ 1) ຕໍ່ທະບຽນວິສາຫະກິດເພື່ອເປັນພື້ນຖານໃຫ້ແກ່ການຕໍ່ທະບຽນອາກອນ ຫລື 2) ສ້າງລາຍໄດ້ ຫລື 3) ເພື່ອຕິດຕາມວ່າວິສາຫະກິດຍັງເຄື່ອນໄຫວ ຫລື ບໍ່ ກໍຕາມ.

3. ການຕິດຕາມການເຄື່ອນໄຫວຂອງວິສາຫະກິດ ຫຼັງຈາກໄດ້ຂຶ້ນທະບຽນວິສາຫະກິດໃຫ້ແລ້ວນັ້ນ, ແມ່ນໃຫ້ປະຕິບັດ ຕາມບົດບັນຍັດ ມາດຕາ 17 (ວ່າດ້ວຍຜົນສະທ້ອນຂອງການບໍ່ເຄື່ອນໄຫວທຸລະກິດ) ຂອງກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ ;

4. ບຸກຄົນ ຫລື ພາກສ່ວນໃດ ຫາກຮຽກຮ້ອງ ບໍ່ວ່າດ້ວຍຮູບການໃດກໍຕາມ ໃຫ້ວິສາຫະກິດ ມາຕໍ່ທະບຽນວິສາຫະກິດ ໃນຮູບແບບໃດກໍຕາມ ທີ່ຂັດກັບກົດໝາຍວ່າດ້ວຍວິສາຫະກິດ ແມ່ນໃຫ້ດຳເນີນມາດຕະການຢ່າງເຂັ້ມງວດ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 235 (ວ່າດ້ວຍການສັ່ງໃຫ້ຕໍ່ທະບຽນວິສາຫະກິດ) ຂອງກົດໝາຍວ່າດ້ວຍວິສາຫະກິດ. ./

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;

ດຣ. ນາມ ວິຍະເກດ

ບ່ອນສົ່ງ:

- ພາກສ່ວນສ່ວຍສາອາກອນ ຂອງຂະແໜງການເງິນ ;
- ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
- ບັນດາການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດ.